ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 01624 /ກພສ
ນະຄອນຫຼວງວຽງຈັນ, ວັນທີ04 ມີນາ 2019

# ແຈ້ງການແນະນຳ

ເຖິງ: ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ I-VII ແລະ ດ່ານພາສີຊາຍແດນໃນທົ່ວປະເທດ.
ເລື່ອງ: ການຈັດຕັ້ງປະຕິບັດດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 48/ລບ, ລົງວັນທີ 19 ກຸມພາ 2019

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ຂໍ້ຕົກລົງກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.

ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ເນື້ອໃນດຳລັດນາຍົກລັດຖະມົນຕີ ສະບັບເລກທີ 48/ລບ, ລົງວັນທີ 19 ກຸມພາ 2019 ວ່າດ້ວຍການລົບລ້າງບາງມາດຕາຂອງມະຕິຕົກລົງຂອງສະພາລັດຖະມົນຕີ ສະບັບເລກທີ 47/ປສລ, ລົງວັນທີ 26 ມິຖຸນາ 1989 ໃຫ້ມີຄວາມຊັດເຈນ, ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ.

ຫົວໜ້າກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:

1. ການຈັດເກັບຄ່າພາສີຂາອອກ ສຳລັບການສົ່ງອອກສິນຄ້າ, ເຄື່ອງຂອງໄປຕ່າງປະເທດ ໃຫ້ຈັດຕັ້ງປະຕິບັດຕາມລັດຖະບັນຍັດປະທານປະເທດ ສະບັບເລກທີ 02/ປປທ, ລົງວັນທີ 27 ເມສາ 2012 ວ່າດ້ວຍລາຍການສິນຄ້າ ແລະ ອັດຕາພາສີຂາອອກ;
2. ສຳລັບບໍລິສັດໃດ ທີ່ໄດ້ສົ່ງອອກສິນຄ້າ, ເຄື່ອງຂອງ ຊຶ່ງມີໜັງສືລັດຖະການຈາກກົມພາສີ ທີ່ຖືກເສຍຄ່າຊັກພິເສດຕາມມາດຕາ 15, 16 ຂອງມະຕິຕົກລົງສະພາລັດຖະມົນຕີ ວ່າດ້ວຍລະບອບພາສີ-ອາກອນຂອງລັດ ສະບັບເລກທີ 47/ປສລ, ລົງວັນທີ 26 ມິຖຸນາ 1989 ແຕ່ຍັງບໍ່ທັນໄດ້ສົ່ງອອກໝົດ ແມ່ນໃຫ້ຍົກເລີກການເກັບຄ່າຊັກພິເສດດັ່ງກ່າວ;
3. ຂັ້ນຕອນການປະກອບເອກະສານ ແລະ ບ່ອນອີງໃນການສົ່ງອອກ ໃຫ້ປະຕິບັດຕາມກົດໝາຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ຕາມມາດຕາ 59, ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 15 ທັນວາ 2015 ແລະ ບົດແນະນຳການຈັດຕັ້ງປະຕິບັດ ສະບັບເລກທີ 0203/ກງ, ລົງວັນທີ 23 ມັງກອນ 2017 ໂດຍສິນຄ້າ, ເຄື່ອງຂອງ ຕ້ອງໄດ້ເສຍຄ່າຊັບພະຍາກອນທຳມະຊາດຕາມອັດຕາທີ່ກຳນົດໄວ້, ມີເອກະສານຢັ້ງຢືນ ແລະ ອະນຸຍາດຈາກຂະແໜງການກ່ຽວຂ້ອງ;

4. ມອບໃຫ້ຫົວໜ້າກອງຄຸ້ມຄອງພາສີ, ຫົວໜ້າດ່ານພາສີຊາຍແດນ ນໍາພາ, ຊີ້ນໍາອ້າຍນ້ອງພາສີໃນການກວດກາການສົ່ງອອກໃຫ້ມີຄວາມຮັດກຸມ ທາງດ້ານຊະນິດ, ຈໍານວນ, ມູນຄ່າ, ນໍ້າໜັກ ພ້ອມທັງອໍານວຍຄວາມສະດວກ ແລະ ນໍາໃຊ້ເຄື່ອງມືກວດກາດ້ວຍລະບົບສາຍແສງ, ຊິງຊັ່ງນໍ້າໜັກສະເພາະບັນດາດ່ານ ທີ່ມີອຸປະກອນດັ່ງກ່າວເຂົ້າໃນການກວດກາ;
5. ມອບໃຫ້ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນພ້ອມກັນຈັດຕັ້ງປະຕິບັດແຈ້ງການແນະນໍາສະບັບນີ້ຢ່າງເຂັ້ມງວດ;
6. ຖ້າພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ໃຫ້ສັງລວມລາຍງານກົມພາສີ ເພື່ອຊອກຫາວິທີແກ້ໄຂຕາມກົດໝາຍ ແລະ ລະບຽບການກໍານົດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

<u>ບ່ອນສົ່ງ:</u>

| | |
|---|---|
| - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 01 ສະບັບ (ໃຊ້ຕາງລາຍງານ) |
| - ທ່ານ ຮອງລັດຖະມົນຕີກະຊວງການເງິນ (ຜູ້ຊີ້ນໍາກົມພາສີ) | 01 ສະບັບ (ໃຊ້ຕາງລາຍງານ) |
| - ພະແນກອ້ອມຂ້າງກົມພາສີ, ພະແນກລະ | 01 ສະບັບ (ເພື່ອຕິດຕາມກວດກາ) |
| - ກອງຄຸ້ມຄອງພາສີ I-VII, ກອງລະ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ , ດ່ານລະ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| - ສໍາເນົາ | 01 ສະບັບ |